# CLOPIGREL

**Generic name:** Clopidogrel Bisulfate Tablets
**Proprietary Name:** CLOPIGREL

**Composition**: Clopidogrel……….75mg

**Indications:**

It is used for secondary prevention of Atherosclerosis and thrombosis events in the following patients:

- Patients with recent myocardial infarction, recent ischemic stroke, or confirmed peripheral arterial disease.
- Patients with acute coronary syndrome:
  - Non-ST segment elevation acute coronary syndrome, including patients with stent placement after percutaneous coronary intervention, combined with aspirin.
  - ST segment elevation acute coronary syndrome, combined with aspirin, can be used in thrombolytic therapy.

**Dosage:**

- Patients with recent myocardial infarction, recent ischemic stroke, or confirmed peripheral arterial disease: 75mg per day.
- Patients with acute coronary syndrome and patients over 75 years old, please consult with your physician for dosing regimen.

**Contraindications:**

- Contraindicated in patients who are allergic to this product.
- Severe liver damage.
- Active pathological bleeding, such as peptic ulcer or Intracranial hemorrhage.

**Warning:**

- Treatment interruption should be avoided. If clopidogrel must be discontinued, medication should be resumed as soon as possible.
- Tell your physician about any other medications you are using.
- Use this product with caution.

**Adverse Effects:**

Hematoma, epistaxis, gastrointestinal bleeding, diarrhea, abdominal pain, indigestion, bruising, headache, and hematuria.

**Dosage form:** Pale pink tablet.

**Expiry date:** 24 months from the date of manufacture.

**Packaging:** 10 Tablets/blister, 50 blisters/box.

**Storage:**

- Shade, seal, and store in a dry place.
- Keep out of reach of children.

**Manufactured by:**

Laos Alliance Pharmaceutical Group Factory
Saysettha Development Zone, Vientiane Capital, Lao PDR
Tel: +856-21-737 051
www.alliancepharmagroup.com

# ເອກະສານກຳກັບຢາ
# CLOPIGREL

**ຊື່ທົ່ວໄປ:** Clopidogrel Bisulfate Tablets

**ຊື່ການຄ້າ:** CLOPIGREL

**ສ່ວນປະກອບ**: Clopidogrel……….75mg

**ຂໍ້ບົ່ງໃຊ້:**

ໃຊ້ເປັນຢາ ປ້ອງກັນເສັ້ນເລືອດ, ປ້ອງກັນການເກີດການເກາະຕົວເກັດເລືອດ ອຸດຕັນ ທາງເດີນເລືອດ ໂດຍອອກລິດໃນການຂັບຫລັ່ງສານ ຍັບຍັ້ງການກ້າມຂອງເລືອດ ໃຊ້ກັບກຸ່ມຄົນເຈັບດັ່ງນີ້:

- ໃນຄົນເຈັບທີ່ມີບັນຫາກ້າມເນື້ອຫົວໃຈ Myocardial infarction, ເສັ້ນເລືອດໃນສະຫມອງຕີບ, ມີບັນຫາກ່ຽວກັບ ພະຍາດເສັ້ນເລືອດແດງ ສ່ວນປາຍທີ່ຜ່ານການກວດບົ່ງມະຕິແລ້ວ.
- ໃນຄົນເຈັບທີ່ມີບັນຫາ ກ່ຽວກັບ ອາການ ເສັ້ນເລືອດຫລໍ່ລ້ຽງຫົວໃຈຢ່າງຮຸນແຮງ (Acute coronary syndrome) ເຊັ່ນ:
  - ໃນກຸ່ມຄົນເຈັບ ທີ່ມີ ເສັ້ນເລືອດຫົວໃຈຕີບ ທີ່ຮຸນແຮງ ທີ່ບໍ່ມີ ST segment ເຊິ່ງລວມທັງຄົນເຈັບທີ່ມີການໃສ່ຂົດລວດ ຫລັງຈາກການເຮັດ Percutaneous coronary intervention, ແລະໃຊ້ຮ່ວມກັບຢາ Aspirin.
  - ຄົນເຈັບທີ່ມີພະຍາດເສັ້ນເລືອດຫົວໃຈຕີບ ທີ່ຮຸນແຮງ ແລະມີ ST segment, ໃຊ້ຮ່ວມກັບຢາ Aspirin, ແລະຍັງສາມາດໃຊ້ ປິ່ນປົວ ອາການກ້າມຂອງເລືອດ (Thrombolytic therapy).

**ວິທີໃຊ້:**

- ເຫມາະສຳລັບໃຊ້ໃນຄົນເຈັບທີ່ມີອາຍຸສູງກວ່າ 18 ປີ.
- ໃຊ້ໃນຄົນເຈັບ ທີ່ກວດພົບ ກ້າມເນື້ອຫົວໃຈຕາຍ (Myocardial infarction), ພະຍາດເສັ້ນເລືອດໃນສະຫມອງຕີບ, ແລະ ພະຍາດ ກ່ຽວກັບເສັ້ນເລືອດແດງສ່ວນປາຍ: ໃຊ້ໃນປະລິມານ 75mg ຕໍ່ວັນ.
- ຄົນເຈັບທີ່ມີບັນຫາກ່ຽວກັບ ອາການຂອງເສັ້ນເລືອດຫລໍ່ລ້ຽງຫົວໃຈ (Acute coronary syndrome):

ໂດຍເລີ່ມໃຊ້ແບບໂຫລດຄັ້ງແລກ ໃນປະລິມານ 300mg (ໃຊ້ຮ່ວມກັບ Aspirin ໃນປະລິມານ 75mg~325mgຕໍ່ວັນ), ຕໍ່ມາ ປັບຂະຫນາດຢາ ລົງໂດຍ ໃຫ້ 75mgຕໍ່ວັນ, ວັນລະຄັ້ງ, ແລະເປັນເວລາຕິດຕໍ່ກັນ. ແນະນຳໃຫ້ ສືບຕໍ່ນຳໃຊ້ ຮ່ວມກັບ Aspirin ໂດຍໃຊ້ບໍ່ເກີນ 100mg. ສຳລັບຄົນເຈັບທີ່ ມີອາຍຸສູງ ກວ່າ 75 ປີ ແລະມີ ST segment ຮ່ວມນຳ ມີກ້າມເນື້ອຫົວໃຈຕາຍ ບໍ່ຄວນໃຊ້ ໃນປະລິມານ ໂຫລດຄັ້ງແລກ, ຂໍ້ມູນການສຶກສາ ຄຣີນິກ ຮັບຮອງການນຳໃຊ້ ຕໍ່ກັນເປັນເວລາ 12 ເດືອນ.

**ຂໍ້ຫ້າມໃຊ້:**

- ຫ້າມໃຊ້ໃນຄົນທີ່ແພ້ຢານີ້.
- ໃນຄົນເຈັບທີ່ມີບັນຫາກ່ຽວກັບຕັບທີ່ຮຸນແຮງ.
- ຫ້າມໃຊ້ໃນກໍລະນີ ເລືອດໄຫລບໍ່ຢຸດ, ມີບາດແຜ ເລືອດໄຫລໃນກະເພາະ, ມີເລືອດໄຫລໃນກະໂຫລກຫົວ.

**ຄຳເຕືອນ:**

- ບໍ່ຄວນຫລີກ ຫລືຢຸດການໃຫ້ຢາກະທັນຫັນ, ກໍລະນີມີການຢຸດຢາສຸກເສີນ ຄວນແນະນຳ ໃຫ້ກັບມາສືບຕໍ່ນຳໃຊ້ທັນທີທີ່ທຳໄດ້.
- ກໍລະນີ ມີການໃຊ້ຮ່ວມກັບຢາໃນກຸ່ມ Anticoagulant, glycoprotein Ⅱ b/Ⅲ a antagonist, Aspirin, heparin, thrombolytic drugs, Nonsteroidal anti-inflammatory drug (NSAIDs), selective serotonin Reuptake inhibitor (SSRIs), 5-hydroxytryptamine Norepinephrine reuptake inhibitor (SNRIs), CYP2C19 inducers, CYP2C19 inhibitors ແລະ ຢາອື່ນໆ ຄວນໃຊ້ຢ່າງລະມັດລະວັງ.

**ຜົນຂ້າງຄຽງ:**

ບັນດາຜົນຂ້າງຄຽງທີ່ພົບ ມີອາການເລືອດໄຫລ, ເລືອດອອກດັງ, ເລືອດອອກໃນກະເພາະອາຫານ, ຖອກທ້ອງ, ປວດທ້ອງ, ອາຫານບໍ່ຍ່ອຍ, ປວດຫົວມີອາການບອບຊ້ຳ, ແລະມີເລືອດອອກທາງປັດສະວະ.

**ຮູບແບບຢາ:** ຢາເມັດສີບົວອ່ອນ.

**ວັນຫມົດອາຍຸ:** 24 ເດືອນ ຫລັງຈາກວັນທີຜະລິດ.

**ຂະຫນາດບັນຈຸມັດຫໍ່:** ບັນຈຸໃນກັບ, 1 ກັບມີ 50 ແຜງ, 1 ແຜງມີ 10 ເມັດ.

**ການເກັບຮັກສາ:**

- ເກັບຮັກສາໄວ້ໃນກັບກ່ອງເດີມ, ປິດສະນິດ, ເກັບຢາໄວ້ໃນ ບ່ອນແຫ້ງ ແລະບໍ່ໃຫ້ຖືກແສງແດດ.
- ເກັບຮັກສາຢາ ໃຫ້ຫ່າງໄກຈາກມືເດັກ.

**ຜະລິດໂດຍ:**

ໂຮງງານຜະລິດຢາ ລາວພັນທະມິດ ຟາກມາ ກຣຸບ ຈຳກັດ
ສະຖານທີ່: ຕັ້ງຢູ່ເຂດ ພັດທະນາກວມລວມ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +856-21-737 051
www.alliancepharmagroup.com